ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ມະຕິ

## ກອງປະຊຸມອົງການປົກຄອງແຂວງປະຈຳເດືອນ 7-8 ປີ 2017

ກອງປະຊຸມອົງການປົກຄອງແຂວງ ປະຈຳເດືອນ 7-8 ປີ 2017ໄດ້ເປີດຂຶ້ນໃນລະຫວ່າງ 28-29 ສິງຫາ 2017 ( ດຳເນີນເປັນເວລາ 1 ວັນເຄິ່ງ )ຢູ່ທີ່ຫ້ອງປະຊຸມຊັ້ນ 5 ສຳນັກງານປົກຄອງແຂວງພາຍໃຕ້ການເປັນປະທານຂອງທ່ານປອນມານ ອິນທະເກດ ເຈົ້າແຂວງອັດຕະປື, ຫົວໜ້າອົງການປົກຄອງແຂວງ, ມີບັນດາທ່ານໃນຄະນະອົງການປົກຄອງແຂວງ, ແຂກຖືກເຊີນຈາກພາກສ່ວນກ່ຽວຂ້ອງຂອງແຂວງ ແລະ ເມືອງ 5 ເມືອງ ເຂົ້າຮ່ວມທັງໝົດ 50 ທ່ານ, ຍິງ 8 ທ່ານ.

ກອງປະຊຸມໄດ້ພ້ອມກັນຄົ້ນຄວ້າປຶກສາຫາລື, ປະກອບຄຳຄິດຄຳເຫັນ ແລະ ເປັນເອກະພາບກັນຕໍ່ເນື້ອໃນບົດສະຫຼຸບລາຍງານດ້ານວຽກງານຕ່າງໆ ທີ່ສະເໜີເຂົ້າໃນກອງປະຊຸມຄັ້ງນີ້ ເປັນຕົ້ນ: ສະພາບການນຳໃຊ້ລະບົບໄຟຟ້າສາທາລະນະ ( ໄຟເບືອງທາງ ), ການແກ້ໄຂພາຫະນະປະເພດລົດຈັດທີ່ຢຶດໄດ້ຜ່ານມາ, ການຢຸດຕິການເຄື່ອນໄຫວການສຳຫລວດຂຸດຄົ້ນຄຳຢູ່ເຂດນ້ຳຊວນ ເມືອງພູວົງ ຂອງບໍລິສັດ ລາວບໍລິການ, ການຢຸດຕິການສຳຫລວດ-ອອກແບບເສັ້ນທາງລຽບຕາມຊາຍແດນ ລາວ-ຫວຽດນາມ ຂອງບໍລິສັດ ລາດຊະວົງ, ການຈັດຕັ້ງປະຕິບັດຄຳສັ່ງເລກທີ 15/ນຍ-ການແກ້ໄຂບັນຫາໄມ້- ການປະມູນຊື້-ຂາຍໄມ້-ການດັດສົມໂຮງງານປຸງແຕ່ງໄມ້-ຜະລິດຕະພັນໄມ້ເພື່ອສົ່ງອອກ ທີ່ຕິດພັນກັບການແກ້ໄຂລົດໄມ້ 27 ຄັນລົດ, ການແກ້ໄຂຄວາມບໍ່ສະຫງົບຢູ່ຕາມບໍລິເວນຊາຍແດນ (ລາວ-ຫວຽດນາມ ແລະ ລາວ-ກຳປູເຈຍ) ໄລຍະ 3 ເດືອນ (6-7-8) ປີ 2017ແລະ ທິດທາງແກ້ໄຂໃນຕໍ່ໜ້າ,ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ 6 ເດືອນຂາດຕົວ ປີ 2017 ແລະ 2 ເດືອນ (7-8) ປີ 2017ແລະ ຄາດຄະເນ 4 ເດືອນທ້າຍ ປີ 2017, ຄວາມຄືບໜ້າການສຳຫລວດເສັ້ນທາງ 18 ເບ ຕິດພັນກັບການແກ້ໄຂເສັ້ນທາງໃນລະດູຝົນ, ການພັດທະນາລະບົບໂທລະຄົມມາຄົມ ແລະ ການສື່ສານໃນທົ່ວແຂວງ, ສະພາບການຜະລິດລະດູຝົນປີ 2017; ການແກ້ໄຂໄພພິບັດລວມຂອງແຂວງ ປີ 2017 ແລະ ການເກັບກຳແຮງງານທີ່ໄປອອກແຮງງານນຳບັນດາໂຄງການລົງທຶນຕ່າງໆຢູ່ພາຍໃນແຂວງ; ໂດຍລວມແລ້ວ, ກອງປະຊຸມໄດ້ເຫັນດີເປັນເອກະພາບຕໍ່ຜົນການປະຕິບັດແຕ່ລະໜ້າວຽກໃນໄລຍະຜ່ານມາ ແຕ່ມີບາງດ້ານຕ້ອງໄດ້ເອົາໃຈໃສ່ປັບປຸງ, ສືບຕໍ່ຈັດຕັ້ງປະຕິ ບັດດ້ວຍຄວາມຮັບຜິດຊອບສູງຂຶ້ນຕື່ມ, ຊຶ່ງກອງປະຊຸມໄດ້ເອກະພາບໃນດ້ານຫລັກການ ເພື່ອສືບຕໍ່ເຄື່ອນໄຫວນຳພາ ແລະ ຈັດຕັ້ງປະຕິບັດວຽກງານຂອງອົງການປົກຄອງແຂວງໃນຕໍ່ໜ້າໃຫ້ປະກົດຜົນເປັນຈິງ ດັ່ງນີ້:

1. ການແກ້ໄຂພາຫະນະປະເພດລົດຈັກທີ່ບໍ່ຖືກຕ້ອງ ( ລົດຢຶດ ) ໃຫ້ກອງບັນຊາການ ປກສ ແຂວງ ສົມທົບກັບພາກສ່ວນກ່ຽວຂ້ອງຂອງແຂວງຄື: ສານ, ໄອຍະການ, ພະແນກການເງິນແຂວງ ດຳເນີນການຈັດຕັ້ງປະຕິບັດແກ້

ໄຂ ແລະ ປະມູນຂາຍຕາມກົດໝາຍ ແລະ ລະບຽບການ ພາຍໃນກຳນົດເວລາ 2 ເດືອນ (ເດືອນ 9-10 ປີ 2017) ໃຫ້ສຳເລັດ.

2. ການແກ້ໄຂພາຫະນະປະເພດລົດຈັກທີ່ບໍ່ມີປ້າຍ ຫຼື ຍັງບໍ່ທັນໄດ້ເສຍພາສີ, ໃຫ້ກອງບັນຊາການ ປກສ ແຂວງ ສົມທົບກັບພະແນກ ໂຍທາທິການ-ຂົນສົ່ງແຂວງ, ພະແນກການເງິນແຂວງ ແລະ ພາກສ່ວນກ່ຽວຂ້ອງດຳເນີນການກວດກາ ແລະ ຈັດຕັ້ງໜ່ວຍງານບໍລິການເພື່ອຊຸກຍູ້ການເສຍພາສີ ແລະ ຂຶ້ນທະບຽນຖືກຕ້ອງ ພາຍໃນກຳນົດເວລາ 3 ເດືອນ (9-10-11 ປີ 2017) ໃຫ້ສຳເລັດ. ສະເພາະ ພະແນກອຸດສາຫະກຳ ແລະ ການຄ້າແຂວງ ໃຫ້ລົງດຳເນີນການກວດກາ ແລະ ແນະນຳບັນດາຫ້າງຮ້ານຂາຍລົດປະເພດຕ່າງໆ ພາຍໃນແຂວງ ໃຫ້ປະກອບເອກະສານ ແລະ ເສຍພັນທະຕ່າງໆ ໃຫ້ຄົບຖ້ວນ ພ້ອມຂຶ້ນທະບຽນ (ປ້າຍ) ໃຫ້ຄົບຖ້ວນແລ້ວຈິ່ງສາມາດ ໃຫ້ລົດທີ່ຊື້ອອກຈາກຮ້ານໄດ້ ວຽກນີ້ໃຫ້ສຳເລັດພາຍໃນ 4 ເດືອນ (9-10-11-12 ປີ 2017) ໃຫ້ສຳເລັດ.

3. ສືບຕໍ່ຕິດຕາມກວດກາ, ສະກັດກັ້ນການລັກລອບຕັດໄມ້ທຳລາຍປ່າ, ການເກັບກູ້ໄມ້ ແລະ ດັດສົມໂຮງງານຕາມຄຳສັ່ງເລກທີ 15/ນຍ ຢ່າງເຂັ້ມງວດ; ໃນນີ້: ການແກ້ໄຂບັນຫາລົດໄມ້ທີ່ຍຶດໄດ້ 27 ຄັນ ແມ່ນໃຫ້ສືບຕໍ່ສົມທົບກັບຄະນະສະເພາະກິດສູນກາງ ແກ້ໄຂໃຫ້ສຳເລັດໂດຍໄວ. ພ້ອມກັນນັ້ນ ກໍ່ໃຫ້ດຳເນີນການກວດກາຄືນບັນຫາ ລົດໄມ້ 24 ຄັນ ແລະ ລົດໄມ້ 47 ຄັນ ໃນເມື່ອກ່ອນ ແລະ ສືບຕໍ່ວຽກດັດສົມໂຮງງານຕາມເປົ້າໝາຍທີ່ມີໃນລາຍການ. ວຽກນີ້ ມອບໃຫ້ທ່ານ ສຸກສະໄໝ ຈັນທະມາດ ຮອງເຈົ້າແຂວງຜູ້ຊີ້ນຳວຽກງານຂົງເຂດເສດຖະກິດ ເປັນຜູ້ຊີ້ນຳໃນການແກ້ໄຂ ແລະ ປະສານສົມທົບກັບຄະນະສະເພາະກິດສູນກາງ ລົງມາປະຈຳແກ້ໄຂກັບທີ່ໃຫ້ສຳເລັດໂດຍໄວ.

4. ກອງປະຊຸມເຫັນດີໃຫ້ແຕ່ງຕັ້ງຄະນະໜຶ່ງສະເພາະ ເພື່ອສຶກສາເບິ່ງທ່າແຮງ ຫຼື ຄວາມສົນໃຈຂອງປະຊາຊົນເຂົ້າຮ່ວມກັບໂຄງການຜະລິດຂອງບໍລິສັດຮວ່າງແອັງ, ບໍລິສັດນ້ຳຕານອ້ອຍ (TTC) ດ້ວຍການໃຊ້ຮູບການ 2+3 ຫຼື ໃຫ້ເຊົ່າທີ່ດິນ (1+4) ມອບໃຫ້ທ່ານ ສຸກສະໄໝ ຈັນທະມາດ ຮອງເຈົ້າແຂວງຜູ້ຊີ້ນຳວຽກງານຂົງເຂດເສດຖະກິດ ເປັນຜູ້ນຳພາຄະນະຊຸກຍູ້ເສດຖະກິດຂັ້ນແຂວງ ຈັດຕັ້ງປະຕິບັດຕົວຈິງ, ທັງດຳເນີນການເຈລະຈາກັບບໍລິສັດ.

5. ໃຫ້ສືບຕໍ່ສະກັດກັ້ນການລັກລອບຂຸດພະຍາກອນທຳມະຊາດ (ຄຳ, ໄມ້, ຫີນ) ລຽບຕາມບໍລິເວນຊາຍແດນລາວ-ຫວຽດນາມ ແລະ ລາວ-ກຳປູເຈຍ, ໂດຍປະສານງານກັບບັນດາແຂວງຂອງປະເທດເພື່ອນບ້ານ; ປຶກສາຫາລືແບ່ງຄວາມຮັບຜິດຊອບ ແລະ ມອບໜ້າທີ່ໃຫ້ບັນດາເມືອງຕື່ມອີກ ເພື່ອເປັນເຈົ້າການ ແລະ ຮ່ວມກັນແກ້ໄຂບັນຫາຢ່າງເຂັ້ມງວດ. ຕ້ອງເດັດຂາດຕໍ່ຜູ້ກະທຳຜິດ ໂດຍສະເພາະຕໍ່ເຈົ້າໜ້າທີ່ ພະນັກງານ, ທະຫານ, ຕຳຫຼວດທີ່ສົມຮູ້ຮ່ວມຄິດ ວຽກນີ້ ແມ່ນມອບໃຫ້ທ່ານ ພອນສະໄໝ ມຽງລາວັນ ຮອງເຈົ້າແຂວງ ເປັນຜູ້ຊີ້ນຳໃນເວລາປະຕິບັດຕົວຈິງ.

6. ສືບຕໍ່ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປີ 2017 ໃຫ້ບັນລຸຕາມຄາດໝາຍວາງໄວ້; ໃນນີ້, ສຳລັບໂຄງການລົງທຶນນອກແຜນໃຫ້ຂຶ້ນບັນຊີລະອຽດ ແລະ ຊຸກຍູ້ໃຫ້ພະແນກການ, ເມືອງປະກອບເອກະສານໃຫ້ຄົບຖ້ວນ ເພື່ອເປັນບ່ອນອີງໃນການພິຈາລະນາສະເໜີເຂົ້າແຜນການລົງທຶນ ປີ 2018 ໃຫ້ສຳເລັດ, ທຸກໆ ໂຄງການທີ່ຈະເອົາເຂົ້າແຜນໃຫ້ສະພາຮັບຮອງຕ້ອງໄດ້ເອົາມາສະເໜີຕໍ່ກອງປະຊຸມອົງການປົກຄອງແຂວງ ແລະ ກອງປະຊຸມເຈົ້າແຂວງ-ຮອງເຈົ້າແຂວງ ເພື່ອຮັບຮອງ ໂດຍມີການຕົກລົງເຫັນດີຈາກຄະນະປະຈຳພັກແຂວງກ່ອນ. ເອົາໃຈໃສ່ເກັບລາຍຮັບເຂົ້າງົບປະມານ ປີ 2017 ໃຫ້ໝົດຂີດຄວາມສາມາດບົ່ມຊ້ອນຕົວຈິງຂອງແຂວງ, ພ້ອມທັງວິເຄາະວິໄຈແຕ່ລະແຫຼ່ງໃຫ້ຊັດເຈນ.

7. ການສະເໜີຂອງບັນດາບໍລິສັດຕ່າງໆ ຂໍອະນຸມັດຂົນສົ່ງໄມ້ໃນຊ່ວງລະດູຝົນນີ້ແມ່ນບໍ່ເຫັນດີ, ໃຫ້ປະຕິບັດຕາມຄໍາສັ່ງຂອງເຈົ້າແຂວງຢ່າງເຄັ່ງຄັດ, ວຽກນີ້ແມ່ນມອບໃຫ້ພະແນກໂຍທາທິການ ແລະ ຂົນສົ່ງແຂວງແຈ້ງໃຫ້ບັນດາພາກສ່ວນບໍລິສັດຮັບຊາບ ແລະ ຕິດຕາມການຈັດຕັ້ງປະຕິບັດ.

8. ການກໍ່ສ້າງ ແລະ ສ້ອມແປງຂົວທ້ອຍເບດ ທີ່ທາງບໍລິສັດ ພະເມືອງ ເຮັດຫັກນັ້ນແມ່ນມອບຄວາມຮັບຜິດຊອບໃຫ້ບໍລິສັດ ສ້ອມແປງຄືນໂດຍດ່ວນ ແລະ ການແກ້ໄຂທາງເວັ້ນຊົ່ວຄາວໃຫ້ສາມາໄປ-ມາໄດ້ປົກກະຕິ. ວຽກນີ້ແມ່ນມອບໃຫ້ພະແນກ ໂຍທາທິການ ແລະ ຂົນສົ່ງແຂວງ ເປັນຜູ້ຕິດຕາມການຈັດຕັ້ງປະຕິບັດ.

9. ການສ້ອມແປງໄຟຟ້າເບື້ອງທາງທີ່ເປ່ເພຫຼາຍຈຸດ ແມ່ນເຫັນດີໃຫ້ສ້ອມແປງຄືນ ຊຶ່ງໃຫ້ເຮັດເປັນແຜນລະອຽດສະເໜີຫາພະແນກແຜນການ-ການລົງທຶນ ນໍາເອົາເຂົ້າແຜນ ເພື່ອສະເໜີຕໍ່ສະພາທ້ອງຖິ່ນຮັບຮອງ. ວຽກນີ້ແມ່ນມອບໃຫ້ພະແນກພະລັງງານ ແລະບໍ່ແຮ່ແຂວງ ຈັດຕັ້ງປະຕິບັດ; ພາຍຫຼັງມີການສ້ອມແປງສໍາເລັດແລ້ວໃຫ້ພະແນກພະລັງງານ ແລະ ບໍ່ແຮ່ແຂວງ ສົມທົບກັບລັດວິສາຫະກິດໄຟຟ້າເຮັດສັນຍາການຄຸ້ມຄອງ ແລະ ປົກປັກຮັກສາລະຫວ່າງລັດກັບລັດວິສາຫະກິດໄຟຟ້າໃຫ້ຈະແຈ້ງ ແລະ ຂາດຕົວ; ສ່ວນການຕັ້ງເປີດ-ປິດ ກໍ່ໃຫ້ສົມທົບກັບລັດວິສາຫະກິດໄຟຟ້າຊອກວິທີການຕິດຕັ້ງ ໃຫ້ເປັນລະບົບຄືນຕື່ມແບບອັດຕາໂນມັດ.

10. ການແກ້ໄຂບັນດາໜີ້ສິນຄ່າກະແສໄຟຟ້າຂອງບັນດາພາກສ່ວນລັດບໍລິຫານຕ່າງໆ ທີ່ຍັງຄ້າງຜ່ານມາ ແມ່ນມອບໃຫ້ພະແນກພະລັງງານ ແລະ ບໍ່ແຮ່ແຂວງ ສົມທົບກັບລັດວິສາຫະກິດໄຟຟ້າ ເປັນເຈົ້າການຈັດກອງປະຊຸມຮ່ວມກັນກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ເພື່ອປຶກສາຫາລື ແລະ ແກ້ໄຂບັນຫາດັ່ງກ່າວ; ສໍາລັບແຕ່ນີ້ເມືອໜ້າຖ້າພາກສ່ວນໃດບໍ່ຈ່າຍກໍ່ພິຈາລະນາຕັດໄຟ. ພາຍຫຼັງຈັດຕັ້ງປະຕິບັດແລ້ວໃຫ້ລາຍງານຄືນຕໍ່ກອງປະຊຸມອົງການປົກຄອງແຂວງໃນຄັ້ງຕໍ່ໄປ.

11. ກ່ຽວກັບການສົ່ງອອກຜະລິດຕະພັນປະເພດ ນໍ້າຕານ, ໝາກໄມ້ຕ່າງໆຂອງຜູ້ປະກອບການໃຫ້ມີການປັບປຸງໄວຂຶ້ນກວ່າເກົ່າ, ໃຫ້ພະແນກອຸດສາຫະກໍາ ແລະ ການຄ້າແຂວງເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຈັດກອງປະຊຸມປຶກສາຫາລື ຊອກແນວທາງແກ້ໄຂ.

12. ການຊຸກຍູ້ສົ່ງເສີມການຜະລິດລະດູຝົນ, ການຟື້ນຟູຫລັງນໍ້າຖ້ວມຢູ່ບາງຈຸດ ແມ່ນມອບໃຫ້ພະແນກກະສິກໍາ ແລະ ປ່າໄມ້ແຂວງ ສົມທົບກັບບັນດາເມືອງເປັນເຈົ້າການ ແລະ ຮັບຮ້ອນໃນການຈັດວາງເນື້ອທີ່ການຜະລິດຄືນໃໝ່ໃຫ້ເໝາະສົມໃນແຕ່ລະພື້ນທີ່ ແລະ ການແກ້ໄຂບັນຫາສັດຕູພືດລະບາດໃຫ້ທັນການ.

13. ສໍາລັບການຕັ້ງຈຸດກວດກາການນໍາເຂົ້າອາຫານຂອງພາກສ່ວນອຸດສາຫະກໍາການຄ້າໃຫ້ສົມທົບກັບດ່ານສາກົນພູເກືອ ຄືນໃໝ່ ຊອກວິທີ ເພື່ອໃຫ້ກວດຢູ່ຈຸດດຽວກັນລະແລ້ວ ບໍ່ໃຫ້ມີຫຼາຍຈຸດ ອັນເຮັດໃຫ້ເກີດຄວາມລໍາຄານແກ່ນັກທຸລະກິດ; ພາຍຫຼັງທົດລອງໄດ້ 1 ເດືອນໃຫ້ມາລາຍງານຕໍ່ກອງປະຊຸມອົງການປົກຄອງແຂວງ ໃນຄັ້ງຕໍ່ໄປ. ສ່ວນການກວດກາຢູ່ຕາມທ້ອງຕະຫຼາດແມ່ນໃຫ້ສືບຕໍ່.

ກອງປະຊຸມອົງການປົກຄອງແຂວງປະຈໍາເດືອນ 7-8 ປີ 2017ໄດ້ດໍາເນີນມາຮອດເວລາ 11:30 ໂມງ ຂອງວັນທີ 29 ສິງຫາ ປີ2017 ໄດ້ປິດລົງຢ່າງເປັນທາງການດ້ວຍຜົນສໍາເລັດຕາມລະດັບຄາດໝາຍທີ່ວາງໄວ້.

ຕາງໜ້າອົງການປົກຄອງແຂວງ

ເຈົ້າແຂວງ

ປທ ບຸນ ວົງປະດາດ